ຫົວຂໍ້-ເຊີນຊວນໃຫ້ສະໝັກເອົາທຶນ DIA (ການວິໄຈ) ໃນຮອບຕໍ່ໄປ, ສຶກສາທີ່ສະຖາບັນເຕັກໂນໂລຊີແຫ່ງອິນເດຍ, ສະໜັບສະໜູນໂດຍລັດຖະບານແຫ່ງອິນເດຍ.

ດ້ວຍຄວາມຮັກແພງຈາກຫ້ອງການເລຂາທິການ DIA ແຫ່ງອິນເດຍ (ທຶນລະດັບປະລິນຍາເອກສໍາລັບບັນດາປະເທດອາຊຽນ ເພື່ອສຶກສາຢູ່ທີ່ປະເທດອິນເດຍ).

ຂໍເຊີນຊວນສະໝັກເຂົ້າຮ່ວມໂຄງການ DIA ໃນຮອບຕໍ່ໄປ. ເຊີ່ງເປັນໂຄງການພັດທະນາຂີດຄວາມອາດສາມາດທີ່ໃຫຍ່ທີ່ສຸດ ທີ່ລັດຖະບານອິນເດຍມອບໃຫ້ພົນລະເມືອງຕ່າງປະເທດ, ມີທຶນການວິໄຈ 1000 ທຶນສໍາລັບພົນລະເມືອງໃນບັນດາປະເທດອາຊຽນ ເພື່ອເຂົ້າສຶກສາຢູ່ທີ່ສະຖາບັນເຕັກໂນໂລຊີອັນດັບໜຶ່ງຂອງອິນເດຍ.

**ກ່ຽວກັບໂຄງການໂດຍຫຍໍ້:** ໂຄງການ DIA ເປັນໂຄງການມອບທຶນການສຶກສາລະດັບປະລິນຍາເອກໃຫ້ກັບບັນດາປະເທດອາຊຽນ, ໂຄງການນີ້ໄດ້ຖືກປະກາດໃນວັນທີ 25 ມັງກອນ ປີ 2018, ກ່ອນວັນຊາດເຊີ່ງປະກາດໂດຍ ທ່ານ ນາເລນດຣາ ໂມດີ ນາຍົກລັດຖະມົນຕີແຫ່ງ ສ.ອິນເດຍ, ໃນຂະນະທີ່ພົບປະກັບຜູ້ນໍາທັງ 10 ປະເທດທີ່ເປັນສະມາຊິກອາຊຽນ.

**ກ່ຽວກັບ IITs:** IITs ເປັນສະຖາບັນການສຶກສາທີ່ມີຄຸນນະພາບ ແລະ ມີເງື່ອນໄຂການຄັດເລືອກທີ່ເຄັ່ງຄັດ. ສະຖາບັນເຕັກໂນໂລຊີແຫ່ງອິນເດຍໄດ້ຮັບການຍອມຮັບໃນທົ່ວໂລກວ່າເປັນສະຖາບັນຊັ້ນນໍາສໍາລັບການສຶກສາດ້ານວິຊະວະກໍາສາດ ແລະ ການວິໄຈ. IITs ເປັນໜຶ່ງໃນ 50 ສະຖາບັນຊັ້ນນໍາໃນໂລກ ແລະ ເປັນ ໜຶ່ງໃນ 100 ສະຖາບັນຊັ້ນນໍາຂອງໂລກໃນສາຂາວິຊະວະກໍາ.

ການສຶກສາຢູ່ທີ່ IITs ຊ່ວຍໃຫ້ນັກສຶກສາມີຄວາມຄິດໃນການວິເຄາະ ວິຈານ,ມີຄວາມເປັນຜູ້ນໍາ ແລະ ສາມາດນໍາໃຊ້ວິທີທາງວິທະຍາສາດເພື່ອແກ້ໄຂບັນຫາທີ່ທ້າທາຍມະນຸດ. ເຄືອຂ່າຍຂອງອາດີດນັກສຶກສາແມ່ນໄດ້ແຜ່ຂະຫຍາຍເປັນວົງກວ້າງໄປທົ່ວໂລກ.

**IITs ມອບທຶກການສຶກສາທີ່ມີຄຸນນະພາບ ແລະ ເປີດຮັບຢ່າງກວ້າງຂວາງ:** IITs ມີເຄືອຂ່າຍນັກສຶກສາທີ່ ກວ້າງຂວາງທີ່ສຸດ, ອາດີດນັກສຶກສາມີຄວາມເປັນເລີດໃນຫຼາຍສາຂາເຊັ່ນ: ສະຖາບັນການສຶກສາ, ໂຄງການວິທະຍາສາດແຫ່ງຊາດ, ອຸດສາຫະກໍາ, ການເມືອງ, ວັນນະຄະດີ ແລະ ສາຂາອື່ນໆ. ມີຜູ້ຊ່ຽວຊານຫລາຍຄົນທີ່ປະສົບຜົນສໍາເລັດຈາກການສຶກສາຢູ່ທີ່ IITs  ໃນນັ້ນ ລວມທັງ, CEOs ຂອງ Google ແລະ IBM, ຜູ້ຮ່ວມກໍ່ຕັ້ງ ແລະ ອະດີດປະທານຂອງ Infosys, ຮອງປະທານບໍລິສັດ SoftBank Corp ແລະ CEO ຂອງ SoftBank Internet ແລະ Media, ປະທານອົງການຄົ້ນຄວ້າອາວະກາດອິນເດຍ ແລະ ອົງການຄຸ້ມຄອງໂທລະຄົມມະນາຄົມຂອງອິນເດຍ, ບັນດາລັດຖະມົນຕີກະຊວງການຕ່າງປະເທດ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງອິນເດຍ, ນັກການທູດ ແລະ ເຈົ້າໜ້າທີ່ປະຈໍາຢູ່ສໍານັກງານ.

**ທຶນການສຶກສາ:** ທຶນ DIA  ປະກອບມີ ເງິນອຸດໜູນປະຈໍາເດືອນ ຈໍານວນ INR 31,000/- ສໍາລັບສອງປີທໍາອິດ, ຈໍານວນ INR 35,000/- ສໍາລັບໄລຍະເວລາທີ່ຍັງເຫຼືອ ແລະ ການຊ່ວຍເຫຼືອລ້າໃນການຄົ້ນຄວ້າວິໄຈປະຈໍາປີສູງເຖິງ INR 170,000/- ຈໍານວນນີ້ແມ່ນເພື່ອໃຊ້ສໍາລັບຄ່າໃຊ້ຈ່າຍໃນການຄົ້ນຄວ້າເທົ່ານັ້ນ. ໄລຍະເວລາສູງສຸດຂອງທຶນນີ້ແມ່ນ 5 ປີ.

*ຜູ້ສະຫມັກຈະຕ້ອງຈ່າຍ ຄ່າຮຽນ ແລະຄ່າຫໍພັກ ຈາກເງິນອຸດໜູນຂອງຕົນເອງ. ຄ່າທໍານຽມ (ຄ່າຮຽນ ແລະ ຫໍພັກ) ໃນແຕ່ລະສະຖາບັນແມ່ນແຕກຕ່າງກັນໄປ; ຕົວຊີ້ວັດຄ່າຮຽນ ແລະຄ່າຫໍພັກ ຂອງແຕ່ລະສະຖາບັນທີ່ກ່ຽວຂ້ອງສາມາດຊອກຫາຂໍ້ມູນເພີ່ມຕື່ມໄດ້ທີ່ເວັບໄຊທ໌ www.asean-iitd.in

**ສໍາລັບເງື່ອນໄຂການຄັດເລືອກ ແລະຂັ້ນຕອນການຄັດເລືອກ:** ກະລຸນາ ເຂົ້າໄປທີ່ www.asean-iitd.in ສໍາລັບລາຍລະອຽດກ່ຽວກັບລະດັບຂອງໂປຣແກຣມທີ່ສະເໜີໃຫ້ໂດຍ 23 ສະຖາບັນເຕັກໂນໂລຊີອິນເດຍເຂົ້າເບິ່ງວິດີໂອໄດ້ທີ່ https://youtu.be/B5wxQU715Ec ແລະ

https://youtu.be/spL53Fso_Bs ເພື່ອເບິ່ງລາຍລະອຽດຂອງໂຄງການ ແລະ ລາຍລະອຽດຂອງແຕ່ລະສະຖາບັນ ເຕັກໂນໂລຊີ. IITs ກະລຸນາເຂົ້າເບິ່ງເວັບໄຊທ໌ຂອງພວກເຮົາ

( www.asean-iitd.in ) ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບໂຄງການ.

--

ດ້ວຍຄວາມນັບຖື,

**ທີມງານ DIA**